**ແຜນການສອນ**

**ບົດຮຽນໂຮງຮຽນວັນອາທິດ**

**ວັນອາທິດ ທີ 29 ສິງຫາ 2010 (08-29-2010)**

---

## ປະເຊີນກັບພັຍວິບັດດ້ວຍຄວາມກ້າຫານ:

**ຂໍ້ພຣະຄັມພີໃນບົດຮຽນ**: (2 ຊາມູເອນ 15:13-14, 24-26, 30-37; 19:7-8)

**ບົດຮຽນນີ້ກ່ຽວກັບຫຍັງ?:**

ບົດຮຽນນີ້ເວົ້າເຣື່ອງການຄວບຄຸມພັຍວິບັດທີ່ເຂົ້າມາທຳລາຍຊີວິດປະຈຳວັນຂອງທ່ານ.

**ເປັນຫຍັງບົດຮຽນນີ້ຈຶ່ງມີຄວາມສຳຄັນ?:**

ບົດຮຽນນີ້ເປັນບົດຮຽນອັນສຳຄັນໃນຊີວິດເພາະທຸກໆຄົນຈະປະເຊີນກັບພັຍວິບັດເຊັ່ນ: ການຕາຍໃນຄອບຄົວ, ບັນຫາພາຍໃນ, ບັນຫາທີ່ບ່ອນເຮັດວຽກ, ຫລືສະພາບລຳບາກອື່ນໆ. ໂດຍການສຳຣວດກວດເບິ່ງຊີວິດຂອງກະສັດດາວິດຊຶ່ງເພິ່ນໄດ້ປະເຊີນກັບພັຍວິບັດຢ່າງໂຫດຮ້າຍ ພວກເຮົາສາມາດເອົາຕົວຢ່າງຂອງເພິ່ນມາປະກອບໃຊ້ໃນເມື່ອພັຍວິບັດໄດ້ເຂົ້າມາວ່າເພິ່ນໄດ້ເຮັດຢ່າງໃດຈຶ່ງເອົາຊະນະໄດ້.

**ບົດຮຽນນີ້ໄດ້ມີຜົນສະທ້ອນຕໍ່ຊີວິດແນວໃດ?:**

ບົດຮຽນນີ້ຈະຊ່ອຍໃຫ້ທ່ານເດີນຜ່ານກັບພັຍວິບັດໄດ້ຢ່າງຜູ້ມີຊັຍໃນຊີວິດຂອງທ່ານ.

**ການຈັດຕຽມ ແລະແຜນການສອນຂອງຄຣູ:**

1. ອະທິຖານຂໍການຊົງນຳຈາກພຣະວິນຍານບໍຣິສຸດ ກ່ອນສິ່ງອື່ນໝົດ.
2. ສຶກສາຂໍ້ພຣະຄັມພີທີ່ຈະໃຊ້ໃນບົດຮຽນນີ້.
3. ຖາມລື້ມຄວາມຊົງຈຳຂອງນັກຮຽນໃນບົດຮຽນອາທິດແລ້ວນີ້.
4. ອ່ານ ແຜນການສອນ ໝາຍບ່ອນສຳຄັນ, ປັບປຸງ, ແກ້ໄຂ, ຈົດບັນທຶກ ແລະ ອື່ນໆ........
5. ແຈກຢາຍບົດຮຽນໃຫ້ນັກຮຽນທຸກຄົນ

**ແນະນຳ:**

- ກ່ອນຈະຮອດມື້ເຂົ້າຫ້ອງຮຽນນອາທິດນີ້ ໃຫ້ຕຽມຮູບ ຈັກ 5 ຫາ 10 ແຜ່ນ ຈາກໜັງສືພິມ ທີ່ບັລຍາຍເຖິງຄົນທີ່ໄດ້ຮັບພັຍພິບັດຕ່າງໆ ມາອະພິປາຍ ເຖິງການກະທຳທີ່ສະແດງອອກ ແລະຄວາມຮູ້ສຶກຂອງເຂົາເຈົ້າ.
- ໃຫ້ອ່ານຫົວຂໍ້ເຣື່ອງບົດຮຽນໃນວັນນີ້. ແລະເວົ້າວ່າ ຈຸດເປົ້າໝາຍຊີວິດຂອງທຸກຄົນກໍຈະປະເຊີນກັບພັຍອັນຕະລາຍ. ຂໍໃຫ້ຜູ້ນຶ່ງອາສາສມັກອະທິບາຍເຖິງພັຍວິບັດ ຫລື ອັນຕະລາຍຕ່າງໆ ທີ່ມີຄວາມແຕກຕ່າງກັນ.
- ອ່ານພຣະທັມ ໂຢຮັນ 16:33, ຊຶ່ງສະແດງອອກໃຫ້ເຫັນຢ່າງຊັດເຈນເລີຍວ່າ ພວກເຮົາຈະມີຄວາມທຸກທໍຣະມານ, ແຕ່ຕ້ອງປະເຊີນກັບມັນດ້ວຍຄວາມກ້າຫານ ພຣະຄຣິດຈະເປັນຜູ້ທີ່ເຮັດໃຫ້ພວກເຮົາມີຄວາມໝັ້ນ

ໃຈ ແລະຮັບຮອງປ້ອງກັນພວກເຮົາ.

- ພວກເຮົາຈະຊ່ອຍຄົນທີ່ຢູ່ອ້ອມຮອບເຮົາທີ່ກຳລັງຕົກຢູ່ໃນພັຍວິບັດ ຫລືອັນຕະລາຍຢູ່ໃນປັດຈຸບັນນີ້ ໄດ້ແນວໃດ?

## 1. <u>ໄວ້ວາງໃຈໃນພຣະເຈົ້າເລື້ອຍໄປ</u>: (2 ຊາມູເອນ 15:13-14, 24-26)

- ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ 2 ຊາມູເອນ 15:13-14, 24-26
- ໃຫ້ຂີດເສັ້ນກະດານອອກເປັນ 2 ຫ້ອງ. ຫ້ອງທີນຶ່ງຂຽນ "**ໜີໄປ (ຫລີກໜີ)**" ຫ້ອງທີສອງຂຽນ "**ຢູ່ ແລະຕໍ່ສູ້**" ແລ້ວສົນທະນາກັນກັນໃນເຣື່ອງນີ້ ເພື່ອດຶງດູດຄວາມສົນໃຈນັກຮຽນໃຫ້ເຫັນເຖິງທາງບວກ ແລະທາງລົບ ຂອງດາວິດທີ່ໄດ້ເລືອກ ເອົາການຫລົບໜີ ແລະຢູ່ ນັ້ນມີເຫດຜົນແນວໃດ, ແລ້ວຂຽນຄຳຕອບໃສ່ໃຫ້ຖືກຫ້ອງ ທີ່ຂຽນໄວ້ໃນກະດານນັ້ນ.
- ເປັນຫຍັງຈຶ່ງວ່າການຫລີກໜີຈາກບັນຫາ ເປັນທາງອອກທີ່ສລາດ? ເປັນຫຍັງຈຶ່ງມີການທ້າທາຍໃຫ້ຢູ່ ແລະ ຕໍ່ສູ້? ຈະໃຫ້ຄວາມສນັບສນູນຄວາມກ້າຫານຂອງຄົນອື່ນດ້ວຍວິທີໃດ? ຄວາມພູມໃຈນຳພາໃຫ້ພວກເຮົາ ຕັດສິນໃຈໄປໃນທາງໃດ?
- ຂໍ້ 25-26 ໃນທີ່ສຸດໄດ້ສະແດງເຖິງຄວາມເຊື່ອໄວ້ວາງໃຈໃນພຣະເຈົ້າຂອງດາວິດໄວ້ແນວໃດ?

## <u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ</u>: (2 ຊາມູເອນ 15:13-14, 24-26)

1. ແມ່ນໃຜທີ່ສ້າງຄວາມເດືອດຮ້ອນໃຫ້ດາວິດ ແລະຢາກຈະຍາດເອົາບັນລັງຈາກດາວິດ?
2. ໃນເມື່ອທ່ານໄດ້ຮັບພັຍພິບັດທ່ານເຄີຍໄດ້ກ່າວໂທດໃສ່ຜູ້ໃດ?
3. ມີໃຜແດ່ທີ່ໄດ້ຮູ້ຈັກແລະໄດ້ເປີດເຜີຍໃນເຣື່ອງການເຊື່ອໄວ້ວາງໃຈໃນພຣະເຈົ້າຂອງພວກເຮົາ?
4. ດາວິດໄດ້ສະແດງຄວາມເຊື່ອໄວ້ວາງໃຈໃນພຣະເຈົ້າຂອງລາວແນວໃດ?
5. ຄຳເວົ້າຂອງໂປໂລໃນພຣະທັມ ຟີລິບປອຍ 1:20-21 ໄດ້ມີຜົນຕໍ່ຄວາມເຊື່ອນີ້ຢ່າງໃດ?
6. ໃນທາງໃດທີ່ຄົນອື່ນຈະໄດ້ເຫັນຄວາມເຊື່ອຢ່າງນີ້ໃນຊີວິດຂອງທ່ານ?

## 2.<u>ຢ່າແຍກຕົນເອງອອກຢູ່ຄົນດຽວ</u>: (2 ຊາມູເອນ 15:30-37)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ 2 ຊາມູເອນ 15:30-37
- ດາວິດໄດ້ກັບຄືນໄປຢູ່ໃນຖໍ້າ ເພື່ອຄວາມສະດວກ ແລະກໍປອດພັຍໃນການປົບໜີຈາກຊາອູນ, ແຕ່ ລາວກໍໄດ້ເລືອກເອົາການພົວພັນກັບຄົນອິສຣາເອນຄົນອື່ນໆອີກດ້ວຍ.
- ໃຫ້ນັກຮຽນຈົດການຮ້ອງໄຫ້, ປະຕີນເປົ່າ ແລະເອົາຜ້າຄຸມຫົວ ໃນຂໍ້ທີ 30. ຖາມວ່າ: ການກະທຳເຊັ່ນນີ້ ສະແດງໃຫ້ເຫັນວ່າຄວາມຮູ້ສຶກຂອງດາວິດກ່ຽວກັບເຣື່ອງໃດ?
- ບາງເທື່ອການສະແດງອອກມາພາຍນອກຂອງພວກເຮົາໃນເວລາທີ່ພວກເຮົາພົບກັບບັນຫາທີ່ເປັນອັນຕະລາຍ ນັ້ນແມ່ນຫຍັງ ແລະໃນທາງໃດ?
- ແມ່ນຫຍັງແດ່ທີ່ຮູຊາຍໄດ້ຊ່ອຍດາວິດໃນເວລາດາວິດຕົກຢູ່ໃນຄວາມອັນຕະລາຍ?
- ໃນຖານະພວກເຮົາເປັນຜູ້ທີ່ເຊື່ອ ພວກເຮົາຖືກຮຽກເອີ້ນມາໃຫ້ເປັນຜູ້ຊ່ອຍຄົນອື່ນທີ່ຢູ່ໃນຄວາມອັນຕະລາຍ.
- ດາວິດໄດ້ອະທິຖານວ່າແນວໃດ ໃນຂໍ້ 31?
- ພຣະເຈົ້າໄດ້ຈັດຕຽມຄົນທີ່ຢູ່ອ້ອມຮອບລາວເພື່ອຕອບສນອງການອະທິຖານຂອງລາວແນວໃດ?

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** (2 ຊາມູເອນ 15:30-37)

1. ແມ່ນຫຍັງທີ່ຊາດົກ ແລະຮູຊາຍນຳມາສູ່ດາວິດຢ່າງເປັນທາງການ?
2. ໂດຍສ່ວນຕົວແລ້ວແມ່ນໃຜເປັນຜູ້ປຶກສາທາງຝ່າຍຈິດວິນຍານໃນຊີວິດຂອງທ່ານ?
3. ໃນທາງໃດທີ່ທ່ານມີຄວາມໝັ້ນໃຈ ແລະດຳເນີນຕໍ່ໃນສາຍສັມພັນ ແລະຕິດຕໍ່ພົວພັນກັບຄົນໃດຄົນນຶ່ງ?
4. ທ່ານຈະດຳເນີນສືບຕໍ່ໃນຄວາມສັມພັນນັ້ນໄດ້ແນວໃດ ທັງໆ ທີ່ຕົກຢູ່ໃນອັນຕະລາຍ?
5. ດາວິດອາຈມີຄວາມຕ້ອງການທີ່ຈະຖອນຕົວຈາກເພື່ອນຄົນອື່ນໆ ນັ້ນເພາະເຫດຜົນອັນໃດ? ການທີ່ເຮັດແນວນັ້ນຈະເປັນການຊ່ອຍເຫລືອລາວ ຫລືເປັນການເຮັດໃຫ້ລາວມີຄວາມເຈັບປວດ?

**3 . <u>ເຮັດໃຫ້ການຮັບຜິດຊອບຂອງທ່ານສຳເຣັດ :</u>** (2 ຊາມູເອນ 19:7-8 )

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ກິຈການ 2 ຊາມູເອນ 19:7-8
- ໃຫ້ສລຸບສັ້ນໆ ໃນພຣະທັມ 2 ຊາມູເອນ 16-18 ແລະ 19:1-6 ຊຶ່ງເປັນການຊີ້ໃຫ້ເຫັນການເສົ້າໂສກເສັຽໃຈຂອງດາວິດທີ່ໄດ້ສູນເສັຽລູກຊາຍຂອງລາວ.
- ໃຫ້ແນະນຳນັກຮຽນວ່າ ພວກເຮົາບໍ່ໄດ້ຖືກເອີ້ນມາໃຫ້ເລີກລົ້ມຕໍ່ຄວາມຮູ້ສຶກນັ້ນ, ແຕ່ໃຫ້ສນັບສນູນ, ຮັກ, ແລະໃຫ້ກຳລັງໃຈຕໍ່ກັນ ແລະກັນເພື່ອໃຫ້ພຣະເຈົ້ານຳພາພວກເຮົາຜ່ານຜ່າບັນຫາຕ່າງໆ ເຫລົ່ານັ້ນ.
- ໂຢອາບໄດ້ຖາມດາວິດໃນເວລາທີ່ດາວິດມີຄວາມໂສກເສົ້າວ່າ ດາວິດຢາກໄດ້ຍິນຄຳເວົ້າແນວໃດໃນເວລາທີ່ມີຄວາມໂສກເສົ້າຢູ່ນີ້?

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** 2 ຊາມູເອນ 19:7-8

1. ເປັນດ້ວຍເຫດໃດຫລັງຈາກດາວິດໄດ້ຕໍ່ສູ້ກັບຄວາມຂັດແຍ້ງແລ້ວຊີວິດຂອງລາວຈຶ່ງກັບດີປົກກະຕິ? ເປັນດ້ວຍເຫດໃດພວກເຮົາຈຶ່ງມີການຕໍ່ສູ້ໃນຊີວິດຂອງພວກເຮົາ?
2. ທ່ານຈະເອົາໃຈໃສ່ໃນຄຳປຶກສາຂອງຄົນອື່ນທີ່ເໝືອນກັບໂຢອາບຜູ້ທີ່ເປັນຄົນທີ່ບໍ່ຕໍ່ຕ້ານ ແລະບໍ່ເຮັດໃຫ້ເຈັບປວດໄດ້ຢ່າງໃດ?

**<u>ພຣະຄັມພີແຫ່ງຄວາມຈິງ</u>**

- ພວກເຮົາຕ້ອງສືບຕໍ່ເຊື່ອໄວ້ວາງໃຈໃນພຣະເຈົ້າ ໃນເວລາຫຍຸ້ງຍາກດີກວ່າການຈົ່ມວ່າພຣະອົງ.
- ການພ່າຍໜີຈາກບັນຫາ ບາງເທື່ອກໍເປັນການດີກວ່າຢືນຕໍ່ສູ້ຢູ່. ສະຕິປັນຍາຊ່ອຍໃຫ້ພວກເຮົາຕັດສິນໃຈ.
- ພວກເຮົາຕ້ອງໃຫ້ຄົນນອື່ນຊ່ອຍພວກເຮົາໃຫ້ຜ່ານພົ້ນບັນຫາອັນຕະລາຍໃນຊີວິດຂອງພວກເຮົາ.
- ພຣະເຈົ້າຫລາຍຄັ້ງກໍຈະທຳງານໂດຍຜ່ານທາງຄົນອື່ນໃຫ້ນຳພາພວກເຮົາອອກຈາກພັຍອັນຕະລາຍຕ່າງໆ.
- ໃນເວລາມີອັນຕະລາຍ ໃຫ້ຢູ່ໃກ້ຊິດຕິດພັນກັນແລະກັນນັ້ນຈະເຮັດໃຫ້ພວກເຮົາມີທັສນະທີ່ດີຕໍ່ທຸກບ່ອນທີ່ພວກເຮົາຢູ່.
- ການຢູ່ໂດດດ່ຽວບໍ່ແມ່ນການແກ້ຕົວທີ່ດີທີ່ໃຫ້ພວກເຮົາລະເຫລີງຕໍ່ຄວາມຮັບຜິດຊອບຂອງພວກເຮົາ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org by JH**